BIVAC LAO

# ບໍລິສັດ ບີແວັກລາວ

# ຄູ່ມືການນຳໃຊ້
# ລະບົບແຈ້ງພາສີປະຕູດຽວ

<table>
<tr><td colspan="2"><u>ຂັ້ນຕອນການນຳໃຊ້:</u></td></tr>
<tr><td colspan="2">✓ ການສ້າງ, ການລົງທະບຽນ, ການດັດແກ້, ການກອັບປີ້ SD ແລະ ການຍົກເລີກ SD<br>✓ ການເຊື່ອມໂຍງໃບອະນຸຍາດ ຫຼື ການຄັດຕິດເອກະສານທີ່ກ່ຽວຂ້ອງ<br>✓ ການຄົ້ນຫາ ແລະ ການກວດເບິ່ງລາຍການ SD, TD & LP<br>✓ ການເຊື່ອມໂຍງ TD ຫາ ACDD (A-W)<br>✓ ການຊຳລະໃບເກັບເງິນ (SOI)</td></tr>
<tr><td><u>ໂມດູລ໌:</u></td><td>ໃຊ້ສະເພາະ:</td></tr>
<tr><td>ໃບກຳກັບການຂົນສົ່ງສິນຄ້າ</td><td>✓ ຜູ້ປະກອບການ<br>✓ ຕົວແທນຊິບປິ້ງ</td></tr>
<tr><td colspan="2"><u>ເລກທີ:</u></td></tr>
<tr><td colspan="2">BIVACLAO.VTE. US.IN.06</td></tr>
<tr><td><u>ເວີຊັນ:</u></td><td><u>ວັນທີ:</u></td></tr>
<tr><td>1.3</td><td>ວັນຈັນ ວັນທີ 06 ເດືອນກຸມພາ ປີ 2023</td></tr>
</table>

**ສາລະບານ**

ພາກສະເໜີ ........ 3
ຂັ້ນຕອນການເຂົ້າສູ່ລະບົບໃໝ່........ 5
ກໍລະນີ, ລືມພາສເວີດ ຫຼື ຕ້ອງການປ່ຽນພາສເວີດໃໝ່........ 6
ກ. ຂັ້ນຕອນການປະຕິບັດ ........ 6
I. ການສ້າງ SD ແລະ ລົງທະບຽນອາຊີກູດ້າ ........ 7
II. ການກອັບປີ້ SD/ TD/ LP(ໃນສະຖານະອະນຸມັດແລ້ວເທົ່ານັ້ນ) ........ 19
III. ການດັດແກ້ SD/ TD/ LP (ໃນສະຖານະຖືກສ້າງຂຶ້ນເທົ່ານັ້ນ) ........ 19
IV. ການເຊື່ອມໂຍງ TD ກັບໃບອະນຸຍາດ ........ 22
V. ຍົກເລີກການເຊື່ອມໂຍງ ໃບອະນຸຍາດ ກັບ TD........ 23
VI. ຍົກເລີກ SD/ TD/ LP........ 24
VII. ກວດເບິ່ງຄວາມຄາດເຄື່ອນລະຫວ່າງ LNSW ກັບ ASYCUDA ........ 24
VIII. ການຄົ້ນຫາ SD ........ 25
IX. ໃບສະຫຼຸບການເກັບເງິນ ........ 25

## ພາກສະເໜີ

ປື້ມຄູ່ມືສະບັບນີ້ແມ່ນຂຽນຂຶ້ນ ເພື່ອຊ່ວຍໃຫ້ຜູ້ປະກອບການ ແລະ ຕົວແທນຊິບປິ້ງໃຫ້ມີຄວາມເຂົ້າໃຈກ່ຽວກັບຂະບວນການ ແລະ ໜ້າທີ່ຂອງຕົນເອງ ແບບເປັນຂັ້ນຕອນໃນການປະຕິບັດໃຊ້ ລະບົບ LNSW, ນອກຈາກນັ້ນເຮົາຈະໄດ້ຄຳອະທິບາຍກ່ຽວກັບໜ້າທີ່ ແລະ ປຸ່ມຕ່າງໆທີ່ຢູ່ໃນລະບົບ

| ຊື່ສັນຍາລັກ | ເປັນຮູບພາບ | ຄຳອະທິບາຍ |
|---|---|---|
| ໂມດູລ໌ ໃບກຳກັບການຂົນສົ່ງສິນຄ້າ |  | ໂມດູລ໌ ການສ້າງ SD/ TD/ LP ເພື່ອແຈ້ງຕໍ່ເຈົ້າໜ້າພາສີ |
| ໂມດູລ໌ ການອອກໃບບິນ |  | ໂມດູລ໌ ການອອກໃບບິນ ຫຼັງຈາກເຈົ້າໜ້າທີ່ພາສີໄດ້ປິດສີແລ້ວ |
| ລະຫັດຜູ້ນຳໃຊ້ (L) |  | ແມ່ນລະຫັດຜູ້ນຳໃຊ້ລະບົບຂອງເຈົ້າໜ້າທີ່ພາກລັດ, ພະນັກງານຈາກ LNSW |
| ລະຫັດຜູ້ນຳໃຊ້ (E) |  | ແມ່ນລະຫັດຜູ້ນຳໃຊ້ລະບົບຂອງຜູ້ປະກອບການ, ຕົວແທນຂອງຜູ້ປະກອບການ, ຜູ້ຂົນສົ່ງສິນຄ້າ |
| ໜ້າຫຼັກ |  | ໃຊ້ເພື່ອເຂົ້າສູ່ໜ້າໂມດູລ໌"ໜ້າຫຼັກ" ຂອງລະບົບ |
| ອອກຈາກລະບົບ |  | ໃຊ້ເພື່ອ"ອອກຈາກລະບົບ" |
| SD |  | ກົດໃສ່ເພື່ອສະແດງຟັງຊັນອື່ນໆທີ່ບັນຈຸຢູ່ໃນປຸ່ມດັ່ງກ່າວ. |
| ຄົ້ນຫາ SD |  | ກົດໃສ່ເພື່ອ "ຄົ້ນຫາ SD" ເພື່ອສະແດງໜ້າຈໍທີ່ຈະສ້າງຂໍ້ມູນຂອງ SD ໃສ່ |
| ເອກະສານຂົນສົ່ງ ສິນຄ້າ (TD) |  | ກົດໃສ່ເພື່ອສະແດງຟັງຊັນອື່ນໆທີ່ບັນຈຸຢູ່ໃນປຸ່ມດັ່ງກ່າວ (TD). |
| ຄົ້ນຫາ TD |  | ກົດໃສ່ເພື່ອ "ຄົ້ນຫາເອກະສານຂົນສົ່ງສິນຄ້າ (TD)" |
| ເຊື່ອມໂຍງເອກະສານຂົນສົ່ງສິນຄ້າ (TD) ກັບໃບອະນຸຍາດ |  | ໃຊ້ເພື່ອ "ເຊື່ອມໂຍງເອກະສານຂົນສົ່ງສິນຄ້າ (TD) ກັບໃບອະນຸຍາດ" |
| ຄົ້ນຫາ |  | ໃຊ້ເພື່ອ "ຄົ້ນຫາ" ຫຼືກວດເບິ່ງສະຖານະຂອງ SD ແລະ TD |
| ສະແດງຜົນ |  | ໃຊ້ເພື່ອ "ສະແດງຜົນ" ລາຍລະອຽດຂອງ SD ແລະ TD |
| ຂັ້ນຕອນການດຳເນີນງານ |  | ໃຊ້ເພື່ອດຳເນີນການສ້າງ, ປ້ອນຂໍ້ມູນຂອງເອກະສານຂົນສົ່ງສິນຄ້າ, ດຳເນີນການລົງທະບຽນ ເອກະສານຂົນສົ່ງສິນຄ້າ TD ທີ່ຖືກສ້າງແລ້ວ |
| ການດາວໂຫຼດເພື່ອເບິ່ງ ຫຼື ປິ່ນອອກ |  | ກົດໃສ່ເພື່ອເບິ່ງ ຫຼື ປິ່ນອອກປະກອບມີ **2** ຟັງຊັນ:<br>• ເພື່ອເບິ່ງລາຍການ SD ໃນໜ້າຈໍເປັນຮູບແບບໄຟລ໌ PDF<br>• ເພື່ອເບິ່ງປິ່ນລາຍການ TD ໃນໜ້າຈໍເປັນຮູບແບບໄຟລ໌ PDF |
| ປຽບທຽບ |  | ໃຊ້ເພື່ອປຽບທຽບເປີດໜ້າຈໍ |
| ກອັບປີ້ SD |  | ກົດໃສ່ເພື່ອກອັບປີ້ເອົາຂໍ້ມູນ SD ເກົ່າ |
| ສ້າງໃໝ່ / ລົງທະບຽນໃໝ່ |  | 1) ຕ້ອງການສ້າງ SD ໃໝ່<br>2) ຕ້ອງການລົງທະບຽນໃໝ່ ຫຼັງຈາກ SD ຖືກສ້າງຂຶ້ນແລ້ວ ຫຼັງຈາກນັ້ນ |

| | | |
|---|---|---|
| Drop down |  | ໃຊ້ເພື່ອຊອກຫາລາຍການທີ່ກ່ຽວຂ້ອງໃນປຸ່ມດັ່ງກ່າວ |
| ຫ້ອງພາກບັງຄັບ |  | ຫ້ອງພາກບັງຄັບທີ່ຈຳເປັນຕ້ອງໄດ້ຕື່ມຂໍ້ມູນໃສ່ໃຫ້ຄົບຈຶ່ງສາມາດຜ່ານໄດ້ |
| ບັນທຶກ |  | ສຳລັບບັນທຶກຂໍ້ມູນ |
| ອອກ / ກັບ |  | ສັນຍາລັກນີ້ມີ 2 ຟັງຊັນ:<br>1) "ອອກ" ໝາຍເຖິງອອກຈາກໜ້າຈໍທີ່ກຳລັງດຳເນີນການຢູ່<br>2) "ກັບ" ໝາຍເຖິງກັບສູ່ໜ້າຈໍເກົ່າທີ່ຜ່ານມາ |
| ຕິກເອົາເຄື່ອງໝາຍຖືກ |  | ຕິກໃສ່ "ເຄື່ອງໝາຍຖືກ" ເມື່ອຕ້ອງການເຊື່ອມໂຍງໃບອະນຸຍາດ |
| ເພີ່ມ TD<br>ເພີ່ມລາຍການເອກະສານຄັດຕິດ |  | ສັນຍາລັກນີ້ມີ 2 ຟັງຊັນ:<br>1) ເພີ່ມເອກະສານການຂົນສົ່ງສິນຄ້າ TD ໃໝ່<br>2) ເພີ່ມລາຍການເອກະສານຄັດຕິດໃໝ່ |
| ລຶບ TD |  | ໃຊ້ເພື່ອລຶບເອກະສານຂົນສົ່ງສິນຄ້າ TD |
| ເພີ່ມໄຟລ໌ |  | ໃຊ້ເພື່ອ "ເພີ່ມໄຟລ໌" ຄັດຕິດ (ອັບໂຫຼດ) ເອກະສານ |
| ເບິ່ງໄຟລ໌ |  | ໃຊ້ເພື່ອ "ເບິ່ງໄຟລ໌" ເພື່ອເປີດ ຫຼື ເບິ່ງເອກະສານທີ່ໄດ້ຄັດຕິດໄປ |
| ຄົ້ນຫາ |  | ໃຊ້ເພື່ອ "ຄົ້ນຫາ" ເພື່ອສະແດງລາຍລະອຽດຂອງຂໍ້ມູນ |
| ອັບໂຫຼດ |  | ໃຊ້ເພື່ອ "ອັບໂຫຼດ" ເອກະສານສຳລັບຄັດຕິດ |
| ສົ່ງ |  | ໃຊ້ເພື່ອກົດ "ສົ່ງ" ໄຟລ໌ເອກະສານທີ່ຄັດຕິດ |
| ການແຈ້ງເຕືອນ |  | ໝາຍເຖິງຂໍ້ຄວາມແຈ້ງເຕືອນການດຳເນີນການຂອງທ່ານໄດ້ສຳເລັດແລ້ວ (ຈະສະແດງຂຶ້ນໜ້າຈໍເມື່ອການດຳເນີນງານສຳເລັດ). |
| ລຶບ / ການແຈ້ງເຕືອນເມື່ອດຳເນີນການຜິດເງື່ອນໄຂ |  | ສັນຍາລັກນີ້ມີ 2 ຟັງຊັນ:<br>1) "ລຶບ" ເພື່ອລຶບລາຍການເອກະສານຄັດຕິດທີ່ຍັງບໍ່ທັນໄດ້ສົ່ງ<br>2) ການດຳເນີນງານບໍ່ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດ |
| ລາຍລະອຽດຂອງ TD / ປະຫວັດຂອງ SD / ປະຫວັດຄວາມເປັນມາຂອງ TD |  | ສັນຍາລັກນີ້ມີ 3 ຟັງຊັນ:<br>1) ສະແດງລາຍລະອຽດເອກະສານຂົນສົ່ງສິນຄ້າ TD<br>2) ສະແດງປະຫວັດຄວາມເປັນມາຂອງ SD<br>3) ສະແດງປະຫວັດຄວາມເປັນມາຂອງ TD |
| ຂໍ້ມູນລະບົບທີ່ກ່ຽວຂ້ອງກັບ SD |  | ໃຊ້ເພື່ອສະແດງຂໍ້ມູນຂອງ SD |
| ລາຍການຫີບຫໍ່ສິນຄ້າໃໝ່ LP |  | ໃຊ້ເພື່ອເພີ່ມລາຍການຫີບຫໍ່ສິນຄ້າໃໝ່. |
| ຍົກເລີກ SD |  | ໃຊ້ເພື່ອ "ຍົກເລີກ" ການສ້າງ SD |
| ໜ້າປັດສະແດງລາຍການ TD |  | ໃຊ້ເພື່ອສະແດງຂໍ້ມູນຂອງເອກະສານຂົນສົ່ງສິນຄ້າ TD ເປັນໄຟລ໌ PDF. |

| | | |
|---|---|---|
| ພັບໜ້າຈໍເມນູ |  | ໃຊ້ເພື່ອພັບໜ້າຈໍເມນູເຂົ້າໄປເບື້ອງຊ້າຍມື ແລະ ເຮັດໃຫ້ໜ້າຈໍກ້ວາງຂຶ້ນ |
| ພັບເຂົ້າ / ຂະຫຍາຍໜ້າຈໍອອກ (ໃນ ToDo List) |  | ໃຊ້ເພື່ອຈະພັບ ຫຼື ຂະຫຍາຍໜ້າຈໍ ຕາມທາງລູກສອນຂອງສັນຍາລັກ |
| ຂະຫຍາຍໜ້າຈໍເມນູ |  | ໃຊ້ເພື່ອສະແດງໜ້າຈໍເມນູອອກມາເບື້ອງຂາວມື |
| ຣີເຟລຊ Refresh |  | ໃຊ້ເພື່ອຣີເຟຣັສ ຂໍ້ມູນໃໝ່ ແລະ ສະແດງລາຍການໃໝ່ |
| ເຊື່ອງຂໍ້ມູນ |  | ໃຊ້ເພື່ອສະແດງຜົນໃນລາຍການທີ່ຕ້ອງເຮັດ |
| ຍົກເລີກການເຊື່ອງຂໍ້ມູນ |  | ໃຊ້ເພື່ອຍົກເລີກການເຊື່ອງຂໍ້ມູນ |
| ການແຈ້ງເຕືອນ |  | ເມື່ອປະກົດຂຶ້ນໜ້າຈໍ ໝາຍເຖິງການແຈ້ງເຕືອນໜ້າບໍ່ມີພື້ນທີ່ວ່າງ |
| ອອກ |  | ໃຊ້ເພື່ອອອກຈາກໜ້າຫຼັກທີ່ດຳເນີນການຢູ່ |

## ຂັ້ນຕອນການເຂົ້າສູ່ລະບົບໃໝ່

1. ຫຼັງຈາກທ່ານໄດ້ຮັບອີເມລ໌ການແຈ້ງເຕືອນ ລະຫັດຜູ້ນຳໃຊ້ ແລະ ພາສເວີດໃໝ່ ກ່ອນອື່ນຈະຕ້ອງໄດ້ເຂົ້າລະບົບ ເພື່ອປ່ຽນພາສເວີດໃໝ່ (ລະຫັດຜູ້ນຳໃຊ້ ແລະ ພາສເວີດ ຈະຖືກສົ່ງເຂົ້າໃນອີເມລທີ່ທ່ານລະບຸໄວ້ໃນແບບຟອມຂໍເປີດລະຫັດໃໝ່).


ອະນຸມັດຜູ້ນຳໃຊ້ລະບົບໃໝ່

noreply@laonsw.net
To: pk_davy.a35@yahoo.com

ສະບາຍດີທ່ານຜູ້ນຳໃຊ້ລະບົບ,

ບັນຊີໃນລະບົບ LNSW ຂອງທ່ານໄດ້ຖືກປົດລັອກແລ້ວ. ລະຫັດຜູ້ນຳໃຊ້ ແລະ ລະຫັດຜ່ານຂອງທ່ານແມ່ນ:
**ລະຫັດຜ່ານເຂົ້າສູ່ລະບົບ:**E531
**ລະຫັດຜ່ານ:**@m8mJM (ນີ້ເປັນຂໍ້ຄວາມທີ່ລະບົບສ້າງຂື້ນ)
ນຳໃຊ້ໜັງສືຮັບຮອງເຫລົ່ານີ້, ເພື່ອເຂົ້າສູ່ລະບົບ LNSW ເພື່ອດຳເນີນຂະບວນການປົດລັອກບັນຊີ.
ທ່ານຈຳເປັນຈະຕ້ອງໄດ້ກຳນົດລະຫັດຜ່ານໃຫມ່ໃນການເຂົ້າສູ່ລະບົບຄັ້ງທີ1.
ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ສອບຖາມທີມງານບໍລິຫານລະບົບ LNSW ດ້ວຍ 0307776699, ຫລືສົ່ງອີເມວໄປຫາ helpdesk@laonsw.net.




**ໝາຍເຫດ:** ພາສເວີດໃໝ່ທີ່ຕ້ອງການປ່ຽນຕ້ອງປະກອບມີຂັ້ນຕ່ຳ **6** ຕົວ ຊຶ່ງໃນນັ້ນຕ້ອງປະກອບມີຕົວອັກສອນ, ຕົວເລກ ແລະ ສັນຍາລັກພິເສດ ຕົວຢ່າງ: **@, *, !, #, &**

## ກໍລະນີ, ລືມພາສເວີດ ຫຼື ຕ້ອງການປ່ຽນພາສເວີດໃໝ່

ໃຫ້ເຂົ້າສູ່ໜ້າເຂົ້າລະບົບໂດຍປະຕິບັດຕາມຂັ້ນຕອນທີ **2-3** ຂອງຫົວຂໍ້ຂັ້ນຕອນການເຂົ້າສູ່ລະບົບໃໝ່ທີ່ລະບຸໄວ້ໃນຂ້າງເທິງ *(ອີເມລທີ່ໃສ່ຕ້ອງແມ່ນອີເມລດຽວກັນກັບທີ່ທ່ານລະບຸໄວ້ໃນແບບຟອມຂໍເປີດລະຫັດໃໝ່).*






**ໝາຍເຫດ:** ຫຼັງຈາກດຳເນີນການສຳເລັດ ທ່ານຈະໄດ້ຮັບອີເມວແຈ້ງເຕືອນ ແລ້ວໃຫ້ທ່ານປະຕິບັດການປ່ຽນ ພາສເວີດໃໝ່ຕາມຂັ້ນຕອນ ທີ່ໄດ້ລະບຸໄວ້ຂ້າງເທິງ.

## ກ. ຂັ້ນຕອນການປະຕິບັດ

ເຂົ້າສູ່ໜ້າເຂົ້າລະບົບໃຫ້ປະຕິບັດຕາມຂັ້ນຕອນທີ **2-3** ຂອງຫົວຂໍ້ຂັ້ນຕອນການເຂົ້າສູ່ລະບົບໃໝ່ທີ່ລະບຸໄວ້ໃນຂ້າງເທິງ.




➔ ຂໍ້ຄວນລະວັງ, ໃນກໍລະນີປ້ອນພາສເວີດຜິດເກີນ **10** ຄັ້ງ ລະຫັດຜູ້ນຳໃຊ້ຂອງທ່ານຈະຖືກລັອກ, ໃຫ້ທ່ານຕິດຕໍ່ຫາທີມງານຂອງ ເຮົາຕາມທີ່ຢູ່ທີ່ໄດ້ລະບຸໄວ້ໃນນີ້.






## I. ການສ້າງ SD ແລະ ລົງທະບຽນ ອາຊີກູດ້າ

SD = ຂໍ້ມູນລວມຂອງການຂົນສົ່ງສິນຄ້າ

TD = ຂໍ້ມູນເອກະສານຂົນສົ່ງສິນຄ້າ ແລະ ເຈົ້າຂອງສິນຄ້າ

LP = ລາຍລະອຽດສິນຄ້າ

1 SD ສາມາດມີໄດ້ຫຼາຍ TD ແລະ 1 TD ສາມາດມີໄດ້ 1-120 LP ຕາມແຕ່ລະລາຍການສິນຄ້າດັ່ງຕໍ່ໄປນີ້:

ກ. ສໍາລັບສິນຄ້າພາຫະນະ (ລົດໃຫຍ່ 1 TD ສາມາດແຈ້ງໄດ້ 1 ຄັນ = 1 LP)

ຂ. ສໍາລັບສິນຄ້າພາຫະນະ (ລົດຈັກ 1 TD ສາມາດແຈ້ງໄດ້ 1-10 ຄັນ = 1-10 LP)

ຄ. ສໍາລັບສິນຄ້າທົ່ວໄປ (1 TD ສາມາດແຈ້ງໄດ້ 1-120 ລາຍການ = 1-120 LP)









3. ຫຼັງຈາກບັນທຶກທ່ານຈະໄດ້ເລກ SD ໃນສະຖານະທີ່ສ້າງຂຶ້ນ -> ກົດປຸ່ມ ➕ ເພື່ອເປີດໜ້າ TD




4. ຕື່ມຂໍ້ມູນໃສ່ຫ້ອງທີ່ມີໝາຍດາວສີແດງ * ໃຫ້ຄົບຖ້ວນ -> ກົດປຸ່ມ 💾 -> ລະບົບຈະແຈ້ງເຕືອນບັນທຶກສຳເລັດແລ້ວ




5. ຈາກນັ້ນເລື່ອນລົງມາກົດປຸ່ມ LP ໃໝ່

6. ຕື່ມຂໍ້ມູນໃສ່ໃຫ້ຄົບຖ້ວນແລ້ວກົດປຸ່ມ ລະບົບຈະກັບຄືນສູ່ໜ້າ TD ໂອໂຕ





7. ລາຍການສິນຄ້າຈະສະແດງຕາມລຳດັບໃນກໍລະນີມີຫຼາຍລາຍການ, ຖ້າທ່ານຕ້ອງການເພີ່ມລາຍການໃໝ່, ກອັບປີ້ LP , ດັດແກ້ ຫຼື ລຶບ LP ໃຫ້ເລືອກຕາມຄຳສັ່ງຕໍ່ໄປນີ້













**ໝາຍເຫດ:** ພາຍຫຼັງທີ່ SD/ TD/ LP ໄດ້ລົງທະບຽນແລ້ວຜູ້ປະກອບການຈະບໍ່ສາມາດດັດແກ້ຂໍ້ມູນໃດໆໄດ້, ກໍລະນີຕ້ອງການດັດແກ້ໃຫ້ຕິດຕໍ່ຫາທີມງານ LNSW

## 1.1 ຫຼັງຈາກລົງທະບຽນແລະເຊື່ອມໂຍງໃບອະນຸຍາດແລ້ວ ໃຫ້ຄິກໃສ່ເມນູ ການແຈ້ງພາສີເປັນລາຍລະອຽດ -ລັອກອິນເຂົ້າລະບົບອາຊີກູດ້າ




**ໝາຍເຫດ:.** ທ່ານສາມາດເຂົ້າລະບົບເພື່ອແຈ້ງພາສີເປັນລາຍລະອຽດໄດ້ຢູ່ຕາມຫ້ອງການ ຫຼື ບ້ານຂອງທ່ານທີ່ມີສັນຍານອິນເຕີເນັດ ຕະຫຼອດ 24 ຊົ່ວໂມງ.




ເລືອກ **TD** ທີ່ຕ້ອງການຈະລົງທະບຽນອາຊີກູດ້າແລ້ວ ໃຫ້ກົດປຸ່ມ ແລ້ວໜ້ານີ້ຈະເປີດຂຶ້ນມາ






- ການຕື່ມຂໍ້ມູນທາງດ້ານການເງິນ ແລະ ທະນາຄານ / Financial and banking data ( ຫ້ອງ 28 )






- ການຕື່ມຂໍ້ມູນເລກທີແຜນນຳເຂົ້າ ໃນກໍລະນີເປັນສິນຄ້ານຳເຂົ້າຍົກເວັ້ນພາສີອາກອນ ແລະ ການປ້ອນລະຫັດ TSC ເພື່ອການຄຸ້ມຄອງລາຄາ. ( ຫ້ອງ 44 ແລະ 33 )









## 1.2 ການກວດກາຄວາມຖືກຕ້ອງ ແລະ ການຢັ້ງຢືນເອົາເລກທີໃບແຈ້ງພາສີ.

- ຫຼັງຈາກສຳເລັດການຕື່ມຂໍ້ມູນຄົບຖ້ວນແລ້ວ ໃຫ້ປະຕິບັດຕາມຂັ້ນຕອນດັ່ງຮູບພາບຂ້າງລຸ່ມນີ້.

ກ. ກົດປຸ່ມກວດກາ Verify the document ເພື່ອກວດຄວາມຖືກຕ້ອງກ່ອນການຢັ້ງຢືນເອົາເລກທີ ໃບແຈ້ງ ຫຼື ເລກທີ IM.




1.3 **ກົດປຸ່ມຢັ້ງຢືນ ✔ ເພື່ອເອົາເລກທີໃບແຈ້ງພາສີເປັນລາຍລະອຽດ** (IM number).




## 1.4 ວິທີຄົ້ນຫາເລກທີເອກສານການແຈ້ງພາສີເປັນລາຍລະອຽດທີ່ສຳເລັດແລ້ວ

- ❖ ຄິກໃສ່ຄຳສັ່ງການແຈ້ງພາສີເປັນລາຍລະອຽດ - ຄົ້ນຫາໃບແຈ້ງ
- ❖ ເລືອກວິທີການຄົ້ນຫາ
- ❖ ກົດປຸ່ມ ເພື່ອຄົ້ນຫາ
- ❖ ກົດປຸ່ມ ເພື່ອເປີດເບິ່ງເລກທີໃບແຈ້ງ
- ❖ ກົດປຸ່ມ ເພື່ອເປີດເປັນຟາຍ PDF ແລະ ພິມອອກ




### ❖ ຕົວຢ່າງການພິມໃບແຈ້ງພາສີເປັນລາຍລະອຽດ



ASEAN CUSTOMS DECLARATION DOCUMENT

1 Type of declaration: IM
Custom Office Lodgement: R5C30
3 Forms: 1
4 Customs reference number: I 12347
Date: 9/29/22 12:00 AM
2 Exporter/ Consignor
5 Total items: 3
6 Total Packages: 3
7 Declarant reference number: 2022 40
8 Importer / Consignee: 000000001
NSWA+ TEST 13south, thatluang, Saysettha, Vte
9 Cargo manifest reference: 22R5CRI000083022_08310000001
10 Date of importation and exportation: 19/09/2022
12 Gross weight (Kg): 300.000
14 Identification of declarant / Representative: 000000001
NSWA+ TEST 13south, thatluang, Saysettha, Vte
15 Country of exportation
15 C.E Code: TH
17 C.D Code: LA
16 Country of origin / Code: TH
17 Country of destination
18 Identification and nationality of means of transport: 1234
19 Ctr.: N
20 Terms of delivery: CIF
21 Identification and nationality of means of transport crossing the border: 1234
22 Payment currency / Total invoiced amount: USD 3.00
23 Exchange rate: 15033.000
24 Nature of trans.
25 Mode of transport: 3
27 Place of unloading/loading: R5C30
28 Financial and banking data
29 Customs office of entry / exit: R5C30
30 Location of goods: CONY
31 Container identifier, marks and number of packages, number and type of packages and description of goods
32 Item No.: 1
33 Commodity Tariff Code (AHTN): 0402299000
34 C.O Code: TH
35 G.W (Kg): 100.00
36 Preference
37 Procedure code: 4000000
38 N.W (Kg): 100.000
39 Quota / License
40 Previous customs documents / Summary of declaration
41 Supplementary quantity: KGM 100.000
42 Item price: 1.00
43 Val code
44 Other information covering the liability of goods to specific requirement
45 Adjustment
46 Customs val. after adjust (LAK)
48 Statistics value

47 Collection of duties and taxes

| Type of duty-tax | Calculation base | Rate | Amount | MP |
|---|---|---|---|---|
| Duty | 15,450.00 | 5 | 800.00 | 1 |
| Cons. | 16,250.00 | 0 | 0.00 | 1 |
| VAT | 16,250.00 | 7 | 1,200.00 | 1 |
| Profit | 0.00 | 0 | 0.00 | |
| Total | | | 2000 | |

48 Deferred payment of duty / tax fee
49 Identification of customs warehouse: CONY
Accounting Details: Mode of payment; Assessment number; Receipt number; Date

47 Total amount of customs

| Type of duty-tax | Duties and taxes to collected |
|---|---|
| Duty | 2,400.00 |
| Cons. tax | 0.00 |
| VAT | 3,600.00 |
| Profit tax | 0.00 |
| Total | 6,000.00 |

Valuation Details: Total invoiced amount (LAK) 3.00 USD; Freight paid or payable (LAK); Insurance costs (LAK); Others charges (LAK)

54 Authentification: We hereby certify that the information contained in all pages of this declaration submitted are the best of our knowledge and belief true and correct.
Place ........ Date ........
Status of declarant ........
Name of declarant / representative ........ Signature ........

Name and signature of customs inspector (s): Date ........ Name ........ Signature ........
Name and signature of Chief of customs office of entry / exit point: Date ........ Name ........ Signature ........

## II. ການກັອບປີ້ SD/ TD/ LP (ໃນສະຖານະອະນຸມັດແລ້ວເທົ່ານັ້ນ)







**ໝາຍເຫດ:** ຫຼັງຈາກນັ້ນຈະໄດ້ເລກ SD ໃໝ່ (SD ຈະບໍ່ສາມາດກັອບປີ້ຂ້າມດ່ານໄດ້) ຕົວຢ່າງ: 23VLPRI000028148 ຂອງ ດ່ານທ່າບົກທ່ານາແລ້ງ ຈະບໍ່ສາມາດກັອບປີ້ເປັນ 22R4CRI00000002A

## III. ການດັດແກ້ SD/ TD/ LP (ໃນສະຖານະຖືກສ້າງຂຶ້ນເທົ່ານັ້ນ)



2. ໜ້າ SD ຈະເປີດຂຶ້ນໃຫ້ດັດແກ້ -> ດັດແກ້ສາເລັດໃຫ້ກົດປຸ່ມ







3. ດັດແກ້ TD ກົດເລືອກເອົາລາຍການ TD ທີ່ຕ້ອງການ ດັດແກ້ -> ກົດປຸ່ມ



4. ໜ້າ TD ຈະເປີດຂຶ້ນໃຫ້ດັດແກ້ -> ກົດປຸ່ມ



5. ກົດເລືອກເອົາລາຍການ LP ທີ່ຕ້ອງການດັດແກ້ -> ກົດປຸ່ມ ສະແດງຜົນ LP -> ລະບົບເປີດຂຶ້ນມາໃຫ້ດັດແກ້ ຫຼັງດັດແກ້ສຳເລັດກົດປຸ່ມ -> ລະບົບຈະກັບຄືນສູ່ໜ້າ TD ອີກໂຕ

## IV. ການເຊື່ອມໂຍງ TD ກັບໃບອະນຸຍາດ










**ຂໍ້ຄວນລະວັງ:** ເລກ SD ແລະ ໃບອະນຸຍາດທີ່ສາມາດເຊື່ອມໂຍງໄດ້ຕ້ອງແມ່ນດ່ານທີ່ລະບຸໄວ້ຄືກັນເທົ່ານັ້ນ.




## V. ຍົກເລີກການເຊື່ອມໂຍງ ໃບອະນຸຍາດ ກັບ TD

ກໍລະນີທີ່ທ່ານສາມາດຍົກເລີກການເຊື່ອມໂຍງໄດ້ TD ທີ່ປ້ອນໃສ່ຫ້ອງ **9 ກ.** ຂອງລະບົບອາຊີກູດ້າຕ້ອງຍັງບໍ່ໄດ້ເຂົ້າສີເຫຼືອ, ຖ້າທ່ານມີຄວາມຈຳເປັນຕ້ອງການຍົກເລີກໃຫ້ຕິດຕໍ່ຫາທີມງານ LNSW *(ໃຫ້ປະຕິບັດຢູ່ໃນກຸບໃບອະນຸຍາດ).*







**ໝາຍເຫດ:** ກ່ອນຈະເຊື່ອມໂຍງ SD ຕ້ອງລົງທະບຽນກ່ອນທຸກຄັ້ງ, ຫຼັງຈາກສຳເລັດການເຊື່ອມໂຍງໃບອະນຸຍາດກັບ TD ແລ້ວຈຶ່ງສາມາດລົງທະບຽນໃນລະບົບອາຊີກູດ້າ

## VI. ຍົກເລີກ SD/ TD/ LP

ທ່ານສາມາດຍົກເລີກ **SD/ TD/ LP** ໄດ້ກໍ່ຕໍ່ເມື່ອສະຖານະຂອງ **SD** ໄດ້ລົງທະບຽນແລ້ວເທົ່ານັ້ນ




## VII. ກວດເບິ່ງຄວາມຄາດເຄື່ອນລະຫວ່າງ LNSW ກັບ ASYCUDA

ພາຍຫຼັງທີ່ທ່ານຕີ ບໍ ແລະລົງທະບຽນຢູ່ອາຊີກູດ້າແລ້ວ ໃຫ້ລໍຖ້າ 5 ນາທີ ທ່ານສາມາດກວດເບິ່ງຄວາມຄາດເຄື່ອນຂໍ້ມູນລະຫວ່າງລະບົບ LNSW ກັບ ASYCUDA




| General information | | | | TD Reference | |
|---|---|---|---|---|---|
| No. | SAD reference number | Discrepancy Date&Time | Discrepancy type | TD ID (ACDD) | |
| 1 | R5C10_2022_I_476 | 2022-03-04 15:05:02 | ນ້ຳໜັກລວມຂອງຫີບຫໍ່ບໍ່ຕົງກັນ | 22VLPRI000008076_03040000001 | 22VLPRI |

**ໝາຍເຫດ:** ກໍລະນີຜິດຢູ່ເບື້ອງ ASYCUDA ໃຫ້ໄປແປງນຳເຈົ້າໜ້າທີ່ພາສີ, ຖ້າຜິດຢູ່ LNSW ໃຫ້ຕິດຕໍ່ຫາທີມງານ LNSW.

## VIII. ການຄົ້ນຫາ SD

1. ການຄົ້ນຫາ SD ທີ່ທ່ານໄດ້ສ້າງໄວ້ຜ່ານມາ ໂດຍການຕື່ມຂໍ້ມູນແຕ່ລະຄ່ານທີ່ທ່ານຕ້ອງການຄົ້ນຫາຕາມຫ້ອງທີ່ມີໝາຍດາວສີແດງ ແລະ ເລືອກເວລາທີ່ຕ້ອງການ.
2. ສຳລັບສິນຄ້າພາຫະນະ ຫຼັງຈາກທີ່ສຳເລັດການແຈ້ງເສຍພາສີແລ້ວ ທຸກຄັ້ງຢ່າລືມຄັດຕິດໃບ ບໍ ໃສ່ **TD** ກ່ອນທີ່ຈະໄປຂຶ້ນທະບຽນປ້າຍລົດ.




**ໝາຍເຫດ:** ສຳລັບການສ້າງ **SD/ TD/ LP** ແບບລວມສິນຄ້າ (Consolidation) ເຮົາຈະໄດ້ລົງລາຍລະອຽດໄວ້ອີກປຶ້ມຄູ່ມືໜຶ່ງ.

## IX. ໃບສະຫຼຸບການເກັບເງິນ

ຫຼັງຈາກເຈົ້າໜ້າທີ່ພາສີໄດ້ສຳເລັດການຮັບຮອງ ຫຼື ປິດສີແລ້ວ ທ່ານຈະໄດ້ຮັບໃບສະຫຼຸບການເກັບເງິນແຈ້ງເຕືອນຜ່ານທາງອີເມວ *(ທ່ານສາມາດເຂົ້າລະບົບໂດຍເຂົ້າຜ່ານເມນູ ການອອກໃບບິນ ເພື່ອເບິ່ງລາຍລະອຽດຂອງໃບບິນດັ່ງກ່າວ)*

